# ຈີນແລະວຽດນາມແຂ່ງອິດທິພົນກັນໃນລາວ (ຕອນນຶ່ງ)
# ເພື່ອຍາດຊັພຍາກອນຂອງຊາດລາວ

ການທີ່ຈີນມີອິດທິພົນເພີ້ມສູງຂື້ນເຣື້ອຍໆໃນປະເທດລາວ ຍອ່ມສົ່ງຜົນກະທົບຕໍ່ສາຍສຳພັນອັນຍາວນານທີ່ລາວມີຢູ່ກັບວຽດນາມ ໂດຍທີ່ທັງຈີນແລະວຽດນາມຕາ່ງກຳລັງຈັບຈອ້ງກັນຕາມເດີມ ຕໍ່ຊັພຍາກອນທັມຊາດແລະພລັງນໍ້າຂອງລາວ ຊຶ່ງນອກຈາກມີຢູ່ຢາ່ງອຸດົມສົມບູນແລ້ວ ສວ່ນໃຫ່ຽຍັງບໍ່ໄດ້ຖືກແຕະຕອ້ງກໍ້າກາຍ ເທົ່າທີ່ຜາ່ນມາວຽງຈັນຍັງຄົງໄດ້ຮັບຜົນດີ ດວ້ຍການສາ້ງຄວາມສເມີພາບຈາກການຣຸກຄືບຂອງເພື່ອນບາ້ນທັງສອງຣາຍນີ້

ວຽງຈັນ ການທີ່ຈີນມີອິດທິພົນເພີ້ມສູງຂື້ນເຣືອຍໆໃນລາວ ທີ່ມັ່ງຄັ້ງຊັພຍາກອນກຳລັງຖືກຕີຄວາມຈາກບາງກຸ່ມບາງພວກແລະບາງຄົນ ວາ່ເປັນສິ່ງທີ່ສາ້ງຄວາມເສັຽຫາຍໃຫ້ແກ່ວຽດນາມ ຊຶ່ງເປັນຜູ້ອຸປຖັມຣາຍສຳຄັນທີ່ສຸດແລະໃນທາງພຶດຕິພາຍນັຍ ກໍ່ເປັນຜູ້ຄໍ້າປະກັນຄວາມໝັ້ນຄົງປອດພັຍ ໃຫ້ແກ່ລາວມານານໆແລ້ວແຕ່ແທ້ຈິງແລ້ວ ການປັບສູນຕັ້ງຄວາມສເມີພາບທາງການທູດກັນໃໝ່ຄາວນີ້ຂອງລາວເປັນສວ່ນນຶ່ງແຫ່ງຄວາມພະຍາຍາມຂອງປະເທດທີ່ບໍ່ມີທາງອອກທາງທະເລຣາຍນີ້ ທີ່ຈະບູຣະນະການທາງເສຖກິດກັບພູມີພາກແຖບນີ້ຢາ່ງເຕັມທີຍິ່ງຂື້ນ ແລະເທົ່າທີ່ຜາ່ນມາກໍ່ເບິ່ງຈະກໍ່ໃຫ້ເກີດຜົນປະໂຍດແກ່ລາວເປັນອັນດີ

ລາວກຳລັງມີຄວາມສຳຄັນທາງຍຸທສາດເພີ້ມຂື້ນເຣື້ອຍໆບໍ່ວາ່ຈະແນມດວ້ຍສາຍຕາຂອງຈີນຫຼືວຽດນາມອັນເປັນສອງຊາດໃນເອເຊັຍ ທີ່ກຳລັງມີອັດຕາເຕີບໂຕທາງເສຖກິດຮວດເຮວທີ່ສຸດ ໃນຜົນປະໂຍດຂອງວຽດນາມນັ້ນ ຈຸດສຳຄັນທີ່ສຸດຢູ່ທີ່ເຣື້ອງການຮັກສາ ໃຫ້ຊາຍແດນທາງບົກທີ່ຕິດຕໍ່ກັບລາວ ຢູ່ໃນສະພາບໝັ້ນຄົງປອດພັຍ ຕຣອດຈົ່ນເຖິງເຣື້ອງການພັທນາຂອງທາງເຂົ້າເຖິງຕຣາດ ໃນປະເທດໄທຍໃຫ້ກວາ້ງຂວາງຍິ່ງຂື້ນກວາ່ເດີມ ສວ່ນສຳຫລັບຈີນແລ້ວ ລາວສາມາດເປັນເສັ້ນທາງໃຫ່ຽໃນການສົ່ງອອກ ຜລິຕພັນໄປສູ່ເອເຊັຍຕາວັນອອກສຽງໃຕ້ໄດ້ຢາ່ງກວາ້ງໄກຫລາຽຂື້ນ ໂດຍສະເພາະຢາ່ງຍິ່ງການສົ່ງອອກຈາກພື້ນທີ່ພາກຕາວັນຕົກສຽງໃຕ້ຂອງຕົນ ຊຶ່ງຖືເປັນພື້ນທີ່ຫາ່ງໄກແລະດອ້ຍພັທນາກວ່າສວ່ນອື່ນໆຂອງປະເທດ

ນອກຈາກນັ້ນທັງຈີນແລະວຽດນາມ ຕາ່ງກໍ່ມີຄວາມສົນໃຈເພີ້ມຫລາຽຂື້ນເຣື້ອຍ ໆໃນຊັພຍາກອນທັມຊາດ ຜລິຕຜົນທາງການກະເສດແລະພລັງນໍ້າຂອງລາວ ທີ່ມີຢາ່ງອຸດົມສົມບູນ ອີກທັງສວ່ນໃຫ່ຽຍັງບໍ່ໄດ້ຖືກແຕະຕອ້ງກໍ້າກາຍ ໂດຍສະເພາະພລັງນໍ້ານັ້ນສາມາດທີ່ຈະໄຊ້ຜລິດເປັນກະແສໄຟຟາ້ ເພື່ອເປັນເຊື້ອເພີງໃຫ້ແກ່ເສຖກິດຊຶ່ງກຳລັງຂຍາຍຕົວຂອງປະເທດທັງສອງ ໄດ້ເປັນຢາ່ງດີ

ນັກວິເຄາະບາງຄົນໃນວຽງຈັນທຳນາຍວ່າຄວາມສເມີພາບດ້ານອິດທິພົນບາຣະມີພາຍໃນພັກປະຊາຊົນປະຕິວັດລາວ -ພປປລ -ອີກບໍ່ນານອາດເກີດການປ່ຽນແປງ ໄປທາງຂ້າງທີ່ທຳໃຫ້ຝ່າຍປັກກິ່ງໄດ້ປຽບຫລາຍຂຶ້ນ ເນື່ອງຈາກພວກຜູ້ນຳຣະດັບອາວຸໂສຂອງລາວ ກຳລັງທະຍອຍຖອຍຫ່າງອອກຈາກເວທີການເມືອງ ຂນະທີ່ຜູ້ປະຕິບັດງານຣຸ່ນໜຸ່ມນອ້ຍກວ່າຕົນແລະເຂົາເຈົ້າມີຄວາມຮູ້ຄວາມຊຳນານໃນເຣື້ອງເສຖກິດ ແບບຕຣາດຫລາຽກວ່າ ທີ່ວ່າບໍ່ມີປະສົບການໃນຍຸກການຕໍ່ສູ້ປະຕິວັດ ຂອງພວກຄອມມິນິສກຳລັງກ້າວຂຶ້ນໄປຮັບຕຳແໜ່ງໜ້າທີ່ຊົງອຳນາດທັງຫລາຍ

ເຖິງແມ່ນໃນຄນະປະຈຳຂອງກົມການເມືອງ-ພປປລ -ທີ່ມີດວັຍກັນ -11-ຄົນນັ້ນ ຍັງເຖິງ -10 -ຄົນທີ່ສາມາດເວົ້າພາສາວຽດນາມໄດ້ຢ່າງຄອ່ງແຄ່ວ ອັນເປັນເຄື່ອງໝາຽສະແດງເຖິງຄວາມຜູກພັນຢ່າງລຶກຊຶ່ງເປັນສວ່ນຕົວ ທີ່ພວກເຂົາມີຢູ່ກັບຮ່ານອຍຕຣອດທັງຄນະຜູ້ນຳທາງການເມືອງຂອງປະເທດນັ້ນ ແຕ່ພວກຜູ້ປະຕິບັດງານຣະດັບກາງ ທີ່ກຳລັງຜັນຂຶ້ນສູງໄປເຣື້ອຍ ໆນັ້ນ ກັບມີຈຳນວນນອ້ຍລົງທີ່ເຄີຍໄປສຶກສາໃນວຽດນາມ ດົງກັນຂ້າມຄົນເຫລົ່ານີ້ມີຈຳນວນຫລາຽຂຶ້ນເຣື້ອຍ ໆ ເປັນຜູ້ຜ່ານການສຶກສາໃນອະດີດສະຫະພາບໂຊວຽດ ຈີນຫຼືທີ່ອື່ນໆ ຍອ່ນການດອກລວງຂອງຕາ່ງຊາດທີ່ຈະມາຍາດຊັພຍາກອນຂອງລາວໃຫ້ສູນຊີ້ນ

ນາຍົກຣັຖມົນຕຣີລາວຄົນປັດຈຸບັນ ຄືບົວສອນ ບຸບຜາວັນຜູ້ໄດ້ຮັບການແຕ່ງຕັ້ງຈາກການປະຊຸມສມັດຊາພັກຄັ້ງທີ -8 -ເມື່ອປີ -2006 -ໄດ້ຮັບການຈັບຕາເບິ່ງຈາກຜູ້ຄົນຈຳນວນຫລາຽ ວາ່ເປັນການເຣີ້ມຕົ້ນຂອງການປ່ຽນແປງ ສູ່ທິດທາງທີ່ອິດທິພົນຂອງຈີນຈະເພີ້ມທະວີຂຶ້ນ ໃນຄນະຣັຖບານຂອງລາວ ບົວສອນເກີດເມື່ອປີ -1954 -ໃນຕອນທີ່ຄອມມິນິສເຂົ້າຍຶດຄອງປະເທດໃນປີ -1975 -ນັ້ນບົວສອນເຂົາມີອາຍຸພຽງ -21 -ປີແລະເປັນນັກສຶກສາທີ່ມີບົດບາດເປັນນັກເຄື່ອນໄຫວທາງການເມືອງຂາຍຊາດ ຂອງຣະບອບຄອມມິນິສເຕັມ 100 % ບໍ່ແມ່ນເປັນນັກຮົບຜູ້ກ້າຫານເສິກໃນສົງຄາມປະຕິວັດ ໃນເວລາຕໍ່ມາເຂົາເດີນທາງໄປສຶກສາທີ່ສະຫະພາບໂຊວຽດຂອງຣະບອບຄອມມິນິສ ບໍ່ແມ່ນໄປຮຽນທີ່ວຽດນາມເພາະສະນັ້ນນາຍົກໃນປັດຈຸບັນຈຶ່ງບໍ່ເຊື່ອຈັຍວຽດນາມແລ້ວ

ຈີນເບິ່ງເໝືອນຈະຕະໜັກເຖິງຜົນວັດ ອັນກຳລັງຈະເກີດການປ່ຽນແປງເຊັ່ນນີ້ຂຶ້ນຈຶ່ງໄດ້ມີການນຳເອົາຍຸທສາດທາງການທູດ ທີ່ຄຳນຶງເຖິງຜົນຣະຍະຍາວມາໄຊ້ກັບລາວເພື່ອໃຫ້ລາວເຂົ້າມາຢູ່ໄຕ້ແອກອຳນາດຂອງຕົນ ແທນທີ່ເຂົາຈະມຸ້ງເນັ້ນເພີ້ມນ້ຳໜັກຈາກແສນຍານຸພາບທາງການຄາ້ຂອງຕົນ ຈົ່ນອອກໜ້າອອກຕາຝ່າຍດຽວ ປັກກິ່ງກໍ່ກຳລັງໃຫ້

ຄວາມສຳຄັນໄປດ້ວຍກັບການບົ່ມສມອງລາວ ເພາະຜູ້ນຳຣຸ່ນໜຸ່ມໆນີ້ ໂດຍອາສັຍໂຄງການຕ່າງ ໆ ທີ່ຈະເຊີນພວກເຂົາໄປຍັງຈີນ ເພື່ອຮັບການຝຶກອົບຮົມອັນມີທັງທາງດ້ານວິຊາຊີບອຸດົມການ ແລະທາງການທະຫານໃນຄວາມເຄື່ອນໄຫວເຫລົ່ານີ້ ໃຫ້ດຳເນີນການກັນໄປເພື່ອຈະເອົາໄຊຊະນະຕໍ່ວຽດນາມແລະເອົາລາວເຂົ້າມາຢູ່ໃຕ້ອຳນາດຂອງຕົນ ຢ່າງມີການຄາດການເຖິງການເຕີ້ມຕົ້ນຍຸກໃໝ່ ຊຶ່ງອັນທີ່ຈິງກໍ່ກຳລັງປຣາກົດຂື້ນມາໃຫ້ເຫັນແລ້ວ ເມື່ອຜູ້ປະຕິບັດງານຣຸ່ນເກົ່າທີ່ອີງກັບທາງວຽດນາມ ຄອ່ຍໆຖອຍຫາຍໄປຈາກເວທີການເມືອງ

ຣະຫວ່າງທີ່ ນາຍຍົງ ຈັນທະລັງສີ ໂຄສົກຣັຖບານລາວຝ່າຍຄອມມິນິສວຽດນາມ ໃຫ້ສຳພາດເອເຊັຽໄທຍອອນໄລ ກໍ່ໄດ້ສະແດງໃຫ້ເຫັນເຖິງຄວາມຄິດຂອງຝ່າຍລາວ ຊຶ່ງມຸ້ງຄຳນຶງເຖິງຜົນທາງປະຕິບັດ ໂດຍຣະຫວ່າງທີ່ເວົ້າກັນເຖິງເຣື້ອງຈີນກຳລັງກ້າວຜ່ານຂື້ນ ເປັນມະຫາອຳນາດໃໝ່ຂອງພູມີພາກແຖບນີ້ ໂຄສົກຜູ້ນີ້ໄດ້ກ່າວວ່າການເປີດກວ້າງແລະການບູຣະນາການກັນໃນພູມີພາກແຖບນີ້ ເປັນສິ່ງທີ່ດີກວ່າສົງຄາມເຢັນໃນອະດີດ ຊຶ່ງພວກມະຫາອຳນາດບາງຄົນສ້າງຂື້ນມາ ໃນຕອນນັ້ນທີ່ລາວຕອ້ງກາຍເປັນສວ່ນນຶ່ງຂອງແນວເຂດຄວາມໝັ້ນຄົງດວ້ຍນັ້ນ ເຮັດໃຫ້ລາວຕອ້ງຢູ່ໃນສົງຄວາມຍາວນານເຖິງ-30-ປີ

ເຖິງແມ່ນສິ່ງທີ່ເຂົາເວົ້າອອກມາ ຈະເປັນການອ້າງອີງເຖິງສົງຄາມອິນໂດຈີນ ທີ່ສູ້ຮົບກັບສະຫະຣັຖ ໂດຍກອ່ນໜ້ານັ້ນກໍ່ຮົບກັບຝຣັ່ງເສສ ແຕ່ຄຳເວົ້າຂອງເຂົາກໍ່ຍັງສາມາດນຳມາໃຊ້ອ້າງອີງໄດ້ຢ່າງງາ່ຍດາຍ ເຖິງຍຸກສມັຍແຫ່ງຄວາມສຳພັນອັນເຢັນຊາ ຣະຫວ່າງລາວກັບຈີນໃນຊວ່ງເວລາຈາກປີ-1975-ມາເຖິງປີ-1988-ປັດຈຸບັນ ດວ້ຍການທີ່ພວກປະເທດອະດີດຄອມມິນິສໃນພູມີພາກແຖບນີ້ ຕ່າງປະຕິຮູບເສຖກິດຂອງພວກຕົນທີ່ເຄີຍ ເນັ້ນການວາງແຜນຈາກສູນກາງ ຫັນມາໃຊນະໂຍບາຍທີ່ອາສັຍແຮງຂັບດັນຂອງຕຣາດກັນເພີ້ມຫລາຽຂື້ນ ຈຶ່ງທຳໃຫ້ຄວາມຈຳເປັນຕ່າງ ໆ ໃນເຊີ່ງພານິດ ກາຍເປັນປັດຈັຍທີ່ມານິຍາມບົງການຄວາມສັມພັນ ຣະຫວ່າງຝ່າຍຕ່າງ ໆ ໃນພູມີພາກກັນເສັຽໃໝ່ທັງນີ້ຍອ່ມຮວ່ມເຖິງລາວດວ້ຍ

## ການກຳໜົດຈຸດຢືນ ທີ່ຄຳນຶງຜົນເຊີງພານິດ

ໃນເວລານີ້ ລາວກະຕືຣືຣົ້ນທີ່ຈະໂປໂຮໂມດຕົນເອງໃນຖານະປະເທດ ທີ່ເຊື່ອມໂຍງທາງບົກກັບຊາດອື່ນໆ ຮອບດ້ານ ແທນທີ່ຈະເປັນປະເທດ ທີ່ບໍ່ມີທາງອອກທາງທະເລ ໂດຍກຳລັງເນັ້ນຍ້ຳສັກກະຍະພາບຂອງຕົນ ທີ່ຈະສະແດງບົດບາດເປັນຊຸມທາງ ທາງການຄ້າຣະຫວ່າງຈີນກັບເອເຊັຽຕາວັນອອກສຽງໄຕ້ ໂດຍໃນເຣື້ອງນີ້ແມ່ນ ນາຍຍົງ ໂຄສົກຣັຖບານລາວອະທິບາຍວາ່ ລາວຕອ້ງໄດ້ຮັບຄວາມລຳບາກເດືອດຮອ້ນມານານ ເພາະເປັນດິນແດນທີ່ບໍ່ມີທາງອອກທາງທະເລຕຣອດ ຈົ່ນຢູ່ໃນສະພາບໂດດດຽວ

ດັ່ງນັ້ນການເຊື່ອມໂຍງຕິດຕໍ່ເຖິງກັນໃນພູມີພາກແຖບນີ້ ຈຶ່ງມີແຕ່ໃຫ້ເກີດຜົນດີແກ່ລາວ

ທັສນະເຊັ່ນນີ້ໝາຽຄວາມດວ້ຍວາ່ ລາວເຜີນເຫັນຄຸນຄາ່ຂອງການກະຈາຍຄວາມສັມພັນທາງການທູດ ໃຫ້ຂາ້ມເລີຍໄປຈາກສະພາບທີ່ຈະຕອ້ງເພິ່ງອີງວຽດນາມມາແຕ່ເກົ່າກອ່ນ ການດຳເນີນການເພື່ອມຸ້ງໃຫ້ເກີດຄວາມສເມີພາບເຊັ່ນນີ້ ຍັງບໍ່ໄດ້ຂຍາຍໄປສູ່ຄວາມສັມພັນກັບປະເທດຕາວັນຕົກ ທີ່ຢູ່ໃນຖານະເປັນຜູ້ບໍຣິຈາກໃຫ້ຄວາມຊວ່ຍເຫລືອແກ່ລາວມາຍາວນານ ນັ້ນຄື ຂນະທີ່ຢູ່ວຽງຈັນຍັງຄົງກະຕືຣືຣົ້ນທີ່ຈະຮັບການລົງທຶນ ຕຣອດຈົ່ນຄວາມຊວ່ຍເຫລືອຈາກຕາວັນຕົກ ເພື່ອມາສົ່ງເສີມຜັກດັນເສຖກິດ ສາ້ງງານແລະຍົກຣະດັບມາຕຖານຄວາມເປັນຢູ່ຂອງປະຊາຊົນ ແຕ່ໃນເວລາດຽວກັນນັ້ນ ຣັຖບານລາວກໍ່ຈະພະຍາຍາມຫຼີກລຽ້ງບໍ່ຮັບເງື່ອນໄຂຕາ່ງ ໆ ທີ່ມັກຖືກຜູກຕິດມາກັບຄວາມຊວ່ຍເຫລືອດັ່ງກາ່ວນັ້ນ ໂດຍສະເພາະເງື່ອນໄຂທີ່ຮຽກຮອ້ງໃຫ້ດຳເນີນການປຮັ່ບແປງທາງການເມືອງ ແລະເພີ້ມຄວາມໂປ່ງໃສໃນການດຳເນີນຂອງທາງຣັຖບານ

ໃນອີກດາ້ນນຶ່ງ ການລົງທຶນທີ່ມາຈາກຈີນແລະວຽດນາມນັ້ນ ພວມກຳລັງໄຫລເຂົ້າສູ່ລາວໂດຍບໍ່ໄດ້ມີການຕັ້ງເງື່ອນໄຂລວ່ງໜາ້ ໃນບົດບາດຄວາມເມື່ອປີ-2005-ຂອງມາຕິນ ສຈວ ຟອກ ນັກວິຊາການຜູ້ໂດດເດັ່ນໃນການສຶກສາເຣື້ອງຂອງລາວ ໄດ້ຊີ້ໃຫ້ເຫັນວາ່ຈີນແລະວຽດນາມນັ້ນຈະບໍ່ໄດ້ບັນລຸຜົນປະໂຍດສູງສຸດທາງຍຸທສາດແຕ່ຢາ່ງໃດ ຖາ້ຫາກພັກ ພປປລ ຕອ້ງສູນເສັຽອຳນາດຜູກຂາດທາງການເມືອງຂອງຕົນໄປ ແລະໃນເມື່ອເປັນເຊັ່ນນີ້ແລ້ວ ລາວຈະຍັງຄົງໄດ້ຮັບຄວາມສນັບສນຸນໃນເຊີ່ງພານິດ ຈາກປະເທດທັງສອງຕໍ່ໄປ ໃນຂນະທີ່ ພປປລ ແທບບໍ່ມີແຮງຈູງໃຈອັນໃດທີ່ຈະເຣີ້ມດຳເນີນການປະຕິຮູບທາງການເມືອງ ເພາະຍັງມີມະຫາອຳນາດທັງສອງນີ້ບໍ່ຍອມປອ່ຍປະຣະ ໃຫ້ລາວມີສິດທິໃນຣະບອບປະຊາທິປະໄຕໄດ້

ຄວາມສັມພັນອັນແຂງແກ່ນທີ່ວຽດນາມມີກັບລາວນັ້ນ ມັນເປັນການງອກເງີຍເຕີບໂຕມາຈາກການທີ່ ພັກຄອມມີນິສໃນປະເທດທັງສອງ ຕາ່ງມີຕົ້ນກຳເນີດມາຈາກພັກຄອມມີນິສອິນໂດຈີນໃນຍຸກທົສວັດ-1930-ຄວາມສັມພັນນີ້ຍິ່ງໄດ້ຮັບການເສີມສາ້ງ ໃຫ້ແໜ້ນໜາເຂັ້ມແຂງຂຶ້ນອີກໃນຣະຍະເວລາ-30-ປີຂອງການຕໍ່ສູ້ກັບຝຣັ່ງເສສ ຜູ້ເປັນເຈົ້າອານານິຄົມແລະຕໍ່ຈາກນັ້ນກໍ່ໄດ້ກັບຮັບຣະບອບການປົກຄອງ ທີ່ໜູນຫລັງໂດຍອະເມຣິກັນຊຶ່ງໃນທີ່ສຸດແລ້ວ ຣະບອບການປົກຄອງເຊັ່ນນີ້ກໍ່ຖືກຝາ່ຍຄອມມີນິສຈີນແດງແລະແກວແດງ ໂຄ່ນລົ້ມລົງຢາ່ງບໍ່ມີກະສັດແລະໃນຣະບອບການປົກຄອງປະຊາທິປະໄຕ ອັນມີສິດທິມະນຸດຊົນໄດ້ຫາຽໄປໃນປີ-1975-ນັ້ນຊົ່ນໄປເບີດແລ້ວ

ຄົນຂອງຄອມມິນິສລາວແລະກຳລັງອາວຸດຂອງແນວເໜືອຫຼືວ່າວຽດນາມຄອມມິນິສ ໄດ້ຕໍ່ສູ້ຄຽງບ່າຄຽງໄຫ່ລກັນຕຣອດຣະຫວ່າງສົງຄາມເຫລົ່ານີ້ ໃນເສັ້ນທາງລຳລຽງອາວຸດຍຸດສັມພາຣະຂອງວຽດນາມເໜືອໃນຂນະນັ້ນ ທີ່ມີສະມະນາເອີ້ນຂານກັນວ່າເສັ້ນທາງໂຮຈິມິນແລະມີຊື່ສຽງໂດ່ງດັງເນື່ອງຈາກຖືກໃຊ້ໃນການສູ້ຣົບ ກັບວຽດນາມໄຕ້ ທີ່ໜຸນຫລັງໂດຍສະຫະຣັຖນັ້ນ ກໍ່ເປັນເສັ້ນທາງທີ່ຕັດຜ່ານພາກຕາວັນອອກຂອງລາວ ພວກຜູ້ປະຕິບັດງານຄອມມິນິສລາວມີຈຳນວນຫລາຽ ໄດ້ຮັບການຝຶກອົມຮົມດ້ານອຸດົມການຂ້າຄົນລາວໃຫ້ຊີ້ນຊາດແລະຂ້ານັກປາດທັງພະຍານາໝົ່ນ ເພາະສະນັ້ນເຂົາຈຶ່ງໃຊ້ວິທີເຊັ່ນນາແລ້ວເຂົາເອົາຄວາຍເຖິກໄປຂ້າຖິ້ມ ເສັກແລ້ວເຂົານຳເອົາຄົນກ້າຫານໄປຂ້າຖິ້ມ ແລະການທະຫານຝ່າຍຣາ່ໂນຍ ຂນະທີ່ຈີນມີສວ່ນກຽ່ວຂອ້ງກັບການຕໍ່ສູ້ໃນລາວຄັ້ງນັ້ນ ພຽງແຕ່ເຣື້ອງການສ້າງຖນົນໃນເຂດພາກເໜືອຂອງລາວເທົ້ານັ້ນ

ລາວແລະວຽດນາມໄດ້ລົງນາມທຳສົນທິສັນຍາ ມິຕພາບແລະຄວາມຮວ່ມມືລາວວຽດນາມ ທີ່ມີອາຍຸບັງຄັບໃຊ້ອຳນາດຂົ່ມລາວ -25-ປີກັນຢ່າງເປັນທາງການໃນປີ 1977-ໂດຍມີການເນັ້ນຢ້ຳເຖິງຄວາມສັມພັນທີ່ທັງສອງຝ່າຍ ຕ່າງເອີ້ນກັນວ່າເປັນຄວາມສັມພັນພິເສດ ແຕ່ສຳຫລັບກັບຈີນນັ້ນ ຈາກການທີ່ວຽດນາມເຂົ້າຂ້າງກັບຝ່າຍສະຫາພາບໂຊວຽດແລະຄັດຄ້ານຈີນ ໃນການໂຕ້ແຍ້ງທາງຫລັກການຄອມມິນິສຂອງປະເທດໃຫ່ຽທັງສອງ ຈຶ່ງຍອ່ມໝາຽຄວາມດວ້ຍວ່າຄວາມສັມພັນຣະຫວ່າງລາວ ທີ່ເປັນພັນທະມິດຂອງວຽດນາມ ກັບທາງຈີນນັ້ນກໍ່ພອຍເຢັນຊາໄປດວ້ຍ ຄວາມສັມພັນນີ້ຍິ່ງໃວຣ້າຍລົງອີກ ເມື່ອວຽດນາມຣຸກຣານຂເມນໃນປາຍປີ-1978-ນັ້ນ ຈີນໄດ້ທຳການຣຸກຣານຢ່າງຈຳກັດຕໍ່ພາກເໜືອຂອງວຽດນາມຕອນຕົ້ນປີ-1979

ໃນເວລານີ້ຄວາມສັມພັນທະວິພາຄີຣະຫວ່າງລາວກັບວຽດນາມ ຍັງຢູ່ໃນສະພາບອັນແຂງແກ່ນ ເຖິງແມ່ນສົນທິສັນຍາພັນທະມິດໃນປີ-1977-ນັ້ນ ຈະຖືກປອ່ຍໃຫ້ເປີດອາຍຸລົງໄປເມື່ອປີ-2002-ນັ້ນກໍ່ຕາມ ແຕ່ສາຍສັມພັນສວ່ນບຸກຄົນຣະຫວ່າງພວກຜູ້ນຳລາວແລະວຽດນາມ ຍັງຄົງເຂັ້ມແຂງໃນທາງການເມືອງຈົ່ນພຽງພໍທີ່ຈະທຳໃຫ້ ຄວາມສັມພັນພິເສດດຳລົງຄົງຢູ່ຕໍ່ໄປ ພວກທີ່ດຳເນີນການໂດຍຣັຖຂອງລາວນັ້ນ ຈະສເນີຣາຍງານຂ່າວກຽ່ວກັບຄວາມຣວ່ມມືທະວິພາຄີ ທັງທາງເສຖກິດສັງຄົມ ວັທນະທັມແລະການທະຫານຣະຫວ່າງປະເທດທັງສອງແທບຈະທຸກທິດ ແລ້ວໃຊ້ຄວາມລັບເພື່ອບໍ່ໃຫ້ວຽດນາມແລະຈີນໄດ້ຮັບຮູ້ ແຕ່ໃນແຜນການໂຄສະນາຕາມທີ່ຕ່າງ ໆ ທົ່ວປະເທດລາວນັ້ນໃຫ້ເຕັມໄປດວ້ຍຂໍ້ຄວາມຍົກຍອ້ງຊົມເຊີຍວ່າຄົບຣອບ -45-ປີຂອງຄວາມສັມພັນທາງການທູດ

ຣະຫວ່າງທັງສອງຝ່າຍ ແລະວາຣະຄົບຮອບ-30-ປີຂອງສົນທິສັນຍາມິຕພາບແລະ ຄວາມຮ່ວມມືລາວ ວຽດນາມ ແຕ່ຕອ້ງໄຊ້ສັນຕິພາບພາຍນອກ ສ່ວນພາຍໃນນັ້ນຫ້າມ ບຸກຄົນໃດໆ ເອົາອອກມາໄຊ້ຢ່າງເດັດຂາດ

ຂນະດຽວກັນ ວຽດນາມກໍ່ຍັງຄົງເປັນຄູ່ຄ້າທີ່ໃຫ່ຽທີ່ສຸດເປັນອັນດັບ-2-ຂອງລາວ ຄນະກັມ ການເພື່ອຄວາມຮ່ວມມືວຽດນາມ ລາວໄດ້ຣາຍງານໃນເດືອນ 7-08-ທີ່ຜ່ານມາວ່າ ການ ຄ້າສອງທາງຣະຫວ່າງປະເທດທັງສອງມີມູນຄ່າຢູ່ໃນຣະດັບ-240-ລ້ານດອນລາສະຫະຣັຖໃນ ຊ່ວງເຄິ່ງແຣກປີນີ້ ເພີ້ມຂຶ້ນ 58% ຈາກຊ່ວງດຽວກັນຂອງປີກ່ອນໜ້ານັ້ນ ທັງສອງປະເທດຍັງ ເນັ້ນຢ້ຳເຖິງເປົ້າໝາຽຮ່ວມກັນ ທີ່ຈະຂຍາຍການຄ້າທະວິພາຄີໃຫ້ບັນລຸເຖິງຣະດັບ 1,000 ລ້ານດອນລາພາຍໃນປີ-2010-ແລະເຖິງ-2,000 ລ້ານດອນລາພາຍໃນປີ -2015

## ການແຂ່ງຂັນດ້ານການລົງທຶນ

ວຽດນາມຍັງກຳລັງແຂ່ງຂັນຢ່າງຂຸ້ດເຈນກັບຈີນ ໃນເຣື້ອງການແຜ່ອິດທິພົນດວ້ຍ ການລົງທຶນໃນລາວ ຕົວເລຂທີ່ເຜີຍແຜ່ອອກມາໃນການປະຊຸມ ວ່າດວ້ຍຄວາມຮ່ວມມື ດ້ານການລົງທຶນວຽດນາມ ລາວ ຊຶ່ງຈັດຂຶ້ນທີ່ກຸງວຽງຈັນເມື່ອວັນທີ-12-ສິງຫາຄົມ ສະ ແດງໃຫ້ເຫັນວ່າການລົງທຶນຂອງວຽດນາມ ໄດ້ເພີ້ມຂຶ້ນເປັນ-177-ໂຄງການຊຶ່ງມີມູນ ຄ່າຣວມ-1,280-ລ້ານດອນລາ ຖ້າຫາກຂໍ້ມູນນີ້ຖືກຕອ້ງຍອ່ມໝາຽຄວາມວ່າວຽດນາມ ໄດ້ຢຶດຕຳແໜ່ງຜູ້ລົງທຶນຕ່າງປະເທດຣາຍໃຫ່ຽ ເປັນອັນດັບສອງໃນລາວ ໂດຍຕາມຫລັງ ພຽງແຕ່ປະເທດໄທຍໄດ້ບຽດຈີນລົງມາສູ່ລຳດັບສາມ

ສ່ວນຂອບເຂດທີ່ວຽດນາມສົນໃຈຕັ້ງເປົ້າໝາຽ ມາລົງທຶນໃນລາວນັ້ນມີວິທີກິຈການ ເໜືອງແຮ່ຕຣອດຈົນກິຈການກະເສຕກັມ ແລະການແປຣູບສິນຄ້າກະເສດ ທີ່ມຸ່ງເນັ້ນການ ສົ່ງອອກຣະຍະບໍ່ກີ່ປີ ທີ່ຜານມາໄດ້ເຫັນວຽດນາມມາລົງທຶນໜັກຫລາຽ ໃນດ້ານການທຳສວນ ຢາງທາງພາກໄຕ້ຂອງລາວ ໂດຍສະເພາະຢ່າງຍິ່ງໃນແຂວງສວັນນະເຂດ ແລະແຂວງຈຳ ປາສັກ ນອກຈາກນັ້ນລາວຍັງໄດ້ຮັບຄວາມສົນໃຈຫລາຽຂຶ້ນເຣື້ອຍໆ ໃນຖານະທີ່ມີສັກຍະ ພາບຈະເປັນແຫລ່ງຜລິດໄຟຟ້າພລັງນ້ຳ ແລະໄດ້ມີຣາຍງານວ່າຣັຖວິສະຫະກິດຂອງວຽດ ນາມຢ່າງ ປີໂຕວຽດນາມແລະອີເລັກທຣິຊີ ວຽດນາມກຳລັງວາງແຜນດຳເນີນໂຄງການ ໃໝ່ໆ ໃນປະເທດນີ້ ໃຫ້ຂື້ນຊາກຈາກສັງຄົມໂລກ

ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະການລົງທຶນຣວມທັງເພີ້ມການ ເຂົ້າເຖິງຕຣາດຕ່າງ ໆ ໃນປະເທດໄທຍແລະສ່ວນອື່ນໆ ຂອງພູມີພາກເອເຊັຽຕາ ວັນອອກສຽງໄຕ້ ວຽດນາມຈຶ່ງກຳລັງວຸ້ນວາຍ

ຢູ່ກັບການສ້າງຖະໜົນຫົນທາງ ໃນພາກຕາວັນອອກຂອງລາວ ຕາວັນຕົກອະນຸພູມີພາກລຸ່ມ ແມ່ນ້ຳໂຂງ ຊຶ່ງມີຈຸດມຸ່ງໝາຍທີ່ເຊື່ອມວຽດນາມ ລາວ ໄທຍ ພະມ້າແລະອິນເດັຍ ສ່ວນ ເຊື່ອມຕໍ່ທີ່ສຳຄັນທີ່ສຸດ ຂອງໂຄງການນີ້ກໍ່ຄື ຖະໜົນສາຍຣະຫວ່າງເມືອງດາໜັ່ງ ອັນເປັນ ເມືອງທ່າທາງພາກກາງຂອງວຽດນາມ ກັບ ຂົວມິຕພາບແຫ່ງທີ່ສອງ ຊຶ່ງເປັນຂົວ ຂ້າມແມ່ນ້ຳໂຂງ ທີ່ເຊື່ອມຣະຫວ່າງແຂວງສວັນນະເຂດຂອງລາວ ກັບຈັງຫວັດມຸກດາ ຫານຂອງໄທຍ

ຂນະທີ່ສາຍສັມພັນເຊີງພານິດ ກຳລັງຂຍາຍຕົວໄປຢ່າງຣວດເຣັວເຊັ່ນນີ້ ຄວາມ ເຊື່ອມໂຍງກັນ ທາງດ້ານຄວາມໝັ້ນຄົງຂອງປະເທດທັງສອງ ໜ້າຈະເປັນດ້ານຄວາມ ແໜ້ນໜ້າເປັນຈິງ ຍິ່ງກວ່າດ້ວຍຊ້ຳ ຢ່າງນ້ອຍທີ່ສຸດກໍ່ຈົນກະທັ້ງເຖິງຊ່ວງປາຍທົສວັດ 1980-ຍັງຄົງມີທະຫານວຽດນາມ ຕັ້ງຖານທັບຢູ່ໃນລາວໂດຍປະມານກັນວ່າ ໜ້າ ຈະມີຈຳນວນ-40,000,ຫາ-50,000 ຄົນ ເຖິງແມ່ນວ່າວຽດນາມໄດ້ຖອນທະຫານ ຂອງຕົນອອກມາແລ້ວ ແຕ່ໃນທົສວັດ-1990-ນັ້ນ ແຕ່ກໍ່ຍັງຄົງທຳການຝຶກອົບຮົມ ຜູ້ປະຕິບັດງານຕຣອດຈົນມີສະຖານີຂ່າວກອງ ທາງທະຫານຢູ່ໃນລາວຢ່າງເລີກລັບ ເພື່ອທຳຮາຍຊັພຍາກອນຂອງຊາດລາວຕໍ່ໄປແລະບາງຄັ້ງກໍ່ອອກມາຂົ່ມຂູ່ປະຊາຊົນ ຕາມຊົນຣະບົດຕ່າງ ໆ ທັງນີ້ຕາມຣາຍງານຂອງແຫລ່ງຂ່າວ ບາງແຫ່ງຂອງກອງ ທັບລາວທີ່ບໍ່ພໍໃຈຕໍ່ວຽດນາມ ໄດ້ເວົ້າວ່າ ຍັງມີທະຫານບາງແຫ່ງຄົງຫັນໄປຫາວຽດ ນາມ ເມື່ອຕອ້ງການຄຳປຶກສາດ້ານການທະຫານ ໂດຍສະເພາະຢ່າງຍິ່ງ ໃນເຣື້ອງ ກຽ່ວກັບການກໍ່ຄວາມບໍ່ສງົບຂອງຊົນຊາດມົ້ງ ແລະຕາມການວິເຄາະຂອງບາງ ຝ່າຍ ຄນະຜູ້ແທນທາງທະຫານຂອງລາວ ຍັງໄດ້ໄປວຽດນາມໃນປີ-1999-ແລະ-2000-ເພື່ອຂໍຄຳແນະນຳພາຍຫລັງ ເກີດເຫດການປະທວ້ງແລະກະແສການລອບ ວາງຣະເບີດຢ່າງລຶກລັບຫລາຍຄັ້ງ ໃນນະຄອນຫລວງວຽງຈັນ ມີທະຫານລາວກຸ່ມນຶ່ງ ຫວັງຜົນປະໂຍດທາງການເມືອງ ໄປຫາຂົ່ມຂູ່ປະຊາຊົນຢູ່ຕ່າງແດນແລະມີການທຳ ຣາຍຊີວິດ ເພາະຍອ້ນວ່າພວກທີ່ໄປວຽດນາມ ໄດ້ເຂົ້າອົບຮົມການເມືອງຂອງຣະບອບ ຄອມມິນິສ ກັບມາຂ້າປະຊາຊົນຂອງຕົນເອງ ແຕ່ຝ່າຍທາງທະຫານລາວທີ່ບໍ່ມັກວຽດ ນາມນັ້ນ ໄດ້ພາກັນຝັງຕົວຢູ່ຢ່າງງຽບໆ ເສັຽກອ່ນ ເມື່ອຮອດຍາມປຽ່ນແປງແລ້ວຈະ ອອກມາປອ້ງກັນຊາດປອ້ງກັນປະຊາຊົນຢ່າງແໜ້ນໜ້າແລະດວ້ຍຄວາມຈິງໃຈ

ຈາກສູນກາງ ສັນພູໝອກ ນະຄອນວຽງຈັນ

ໃນນາມພັກປະຊາຊົນລາວອິສຣະ